**ມິຊຊາສົມໂພດປາສກາ**

**ວັນທີ 4 ເມສາ 2021**



**ພຣະວໍລະສານໂດຍນັກບຸນລູກາ 24, 13-35**

ສາມວັນພາຍຫລັງພຣະເຢຊູຊົງສິ້ນພຣະຊົນ, ມີສາວົກສອງຄົນເດີນທາງໄປບ້ານໜຶ່ງຊື່ແອມມາອຸສໄກຈາກນະຄອນເຢຣູຊາແລມປະມານສິບກວ່າກິໂລແມັດ. ທັງສອງສົນທະນາກັນເຖິງເຫດການທີ່ໄດ້ເປັນມາ. ເວລາກຳລັງສົນທະນາກັນໄປນັ້ນ, ພຣະເຢຊູເຈົ້າເອງໄປທັນແລະເດີນທາງຮ່ວມໄປກັບພວກເຂົາ. ແຕ່ວ່າຕາຂອງພວກເຂົາທັງສອງບໍ່ສາມາດຈື່ຈຳພຣະອົງໄດ້. ພຣະເຢຊູເຈົ້າຖາມພວກເຂົາວ່າ: "ພວກເຈົ້າເດີນທາງສົນທະນາກັນເຖິງເລື່ອງຫຍັງ? ເບິ່ງຄືວ່າໂສກເສົ້າແທ້." ຜູ້ໜຶ່ງຊື່ເກລໂອຟາສຕອບວ່າ: "ໝົດນະຄອນເຢຣູຊາແລມມີແຕ່ທ່ານຜູ້ດຽວທີ່ບໍ່ຮູ້ເລື່ອງທາກໍເປັນມາໃນສອງສາມມື້ນີ້." ພຣະອົງຈຶ່ງຖາມວ່າ: "ແມ່ນເລື່ອງຫຍັງ?" ເຂົາຕອບພຣະອົງວ່າ: "ເລື່ອງຂອງເຢຊູຊາວນາຊາແຣັດ, ຜູ້ເປັນປະພາສົກ, ມີຣິດເດດຫລາຍທາງດ້ານກິດຈະການແລະດ້ານຄວາມເວົ້າຕໍ່ພຣະພັກພຣະເປັນເຈົ້າແລະຕໍ່ໜ້າປະຊາຊົນທົ່ວໄປ. ພວກຫົວໜ້າສົງແລະເຈົ້ານາຍຂອງພວກເຮົາໄດ້ມອບພຣະອົງໃຫ້ເຂົາຕັດສິນລົງໂທດປະຫານຊີວິດ ແລ້ວຄຶງພຣະອົງໃສ່ກາງເຂນ. ສ່ວນພວກເຮົາເອງພວກເຮົາຫວັງວ່າ ທ່ານຜູ້ນີ້ແຫລະຈະປົດປ່ອຍຊາດອິສຣາແອນ; ແຕ່ຄືວ່ານັ້ນແລ້ວເຫດການນັ້ນໄດ້ຜ່ານໄປສາມວັນແລ້ວ. ຈິງຢູ່ມີຜູ້ຍິງບາງຄົນໃນພັກພວກຂອງໄທເຮົາໄດ້ທຳໃຫ້ພວກເຮົາວຸ້ນວາຍໃຈຫລາຍ, ຄືພວກນາງໄດ້ໄປທີ່ຄູຫາແຕ່ເຊົ້າໆ, ແລະບໍ່ເຫັນພຣະສົບຂອງພຣະອົງ. ພວກນາງຈຶ່ງຫລົບມາບອກພວກເຮົາວ່າ ມີເທວະດາປະຈັກມາແລະບອກວ່າພຣະອົງມີຊີວິດຢູ່. ພວກເຮົາບາງຄົນກໍໄດ້ໄປທີ່ຄູຫາ ແລະໄດ້ພົບເຫັນສິ່ງຕ່າງໆຄືກັນ ກັບທີ່ພວກຜູ້ຍິງໄດ້ເວົ້າ; ແຕ່ສ່ວນພຣະອົງນັ້ນພວກເຂົາບໍ່ໄດ້ເຫັນ." ພຣະອົງຈຶ່ງກ່າວກັບພວກເຂົາວ່າ: "ໂອ! ຄົນອັບປັນຍາແລະໃຈໂງ່ຊ້າ ເພື່ອຈະເຊື່ອສິ່ງທີ່ພວກປະພາສົກໄດ້ປະກາດໄວ້! ບໍ່ຮູ້ບໍວ່າ ພຣະກຣິສໂຕຈະຕ້ອງທົນທຸກທໍຣະມານນີ້ກ່ອນ ເພື່ອຈະເຂົ້າສູ່ສີມຸງຄຸນຂອງພຣະອົງ?" ແລ້ວພຣະອົງກໍອະທິບາຍພຣະຄຳພີທຸກຂໍ້ທີ່ກ່ຽວເຖິງພຣະອົງຕາມທີ່ບັນດາປະພາສົກໄດ້ກ່າວໄວ້, ເລີ່ມຕົ້ນແຕ່ໂມແຊລົງມາ.

ເມື່ອເດີນໄປໃກ້ຈະຮອດບ້ານບ່ອນພວກເຂົາໄປນັ້ນແລ້ວ, ພຣະອົງກໍທຳທ່າຈະເດີນທາງຕໍ່ໄປ. ແຕ່ທັງສອງໜ່ວງໜ່ຽວພຣະອົງໄວ້ເວົ້າວ່າ: "ເຊີນທ່ານພັກເຊົາຢູ່ກັບພວກເຮົາ, ຍ້ອນໃກ້ຈະຄ່ຳ, ຕາເວັນຈະຕົກແລ້ວ." ພຣະອົງຈຶ່ງເຂົ້າໄປພັກກັບພວກເຂົາ. ເມື່ອພຣະອົງປະທັບນັ່ງໂຕະກັບພວກເຂົາ, ພຣະອົງຊົງຈັບເອົາຂະໜົມປັງ, ຊົງກ່າວສົມມະນາຄຸນ, ແລ້ວບິອອກຍື່ນໃຫ້ພວກເຂົາກິນ. ເວລານັ້ນຕາຂອງພວກເຂົາກໍເປີດອອກແລະຈື່ພຣະອົງໄດ້. ແຕ່ວ່າພຣະອົງຊົງຫາຍຕົວໄປຈາກສາຍຕາຂອງພວກເຂົາແລ້ວ. ທັງສອງຈຶ່ງເວົ້າກັນວ່າ: "ຫົວໃຈພວກເຮົາບໍ່ຮູ້ສຶກຕື່ນຮ້ອນ, ເວລາພຣະອົງກ່າວກັບພວກເຮົາຕາມທາງ ແລະເວລາພຣະອົງອະທິບາຍພຣະຄຳພີໃຫ້ພວກເຮົາຟັງ?" ທັງສອງລຸກຂຶ້ນກັບເມືອນະຄອນເຢລູຊາແລມທັນທີ ແລະໄດ້ພົບພວກອັກຄະສາວົກທັງສິບເອັດກຳລັງຊຸມນຸມກັນຢູ່ກັບສາວົກອື່ນໆອີກ. ພວກນີ້ກໍໄດ້ບອກພວກເຂົາທັງສອງວ່າ: "ພຣະອົງເຈົ້າໄດ້ກັບເປັນຄືນມາຈິງແທ້ແລ້ວ, ແລະພຣະອົງໄດ້ປະຈັກແກ່ຊີມອນແລ້ວ". ສ່ວນສາວົກສອງຄົນນັ້ນກໍໄດ້ເລົ່າເຫດການທີ່ໄດ້ເປັນມາຕາມທາງແລະເລື່ອງພວກເຂົາຈື່ພຣະອົງໄດ້ໃນເວລາພຣະອົງຊົງບິຂະໜົມປັງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຄວາມຍິນດີໃນວັນສົມໂພດປາສການີ້ເປັນເຄື່ອງໝາຍແຫ່ງຄວາມເຊື່ອຂອງພວກເຮົາແລະກໍເປັນເຄື່ອງໝາຍແຫ່ງການໄດ້ພົບພໍ້ຢ່າງແທ້ຈິງກັບພຣະເຢຊູຜູ້ໄດ້ຕາຍແລະໄດ້ກັບເປັນຄືນມາ. ດັ່ງປະສົບການຂອງພວກລູກສິດສອງຄົນທີ່ກຳລັງເດີນກັບເມືອບ້ານເກົ່າເມືອງເດີມຂອງຕົນທີ່ມີຊື່ວ່າ: ແອມມາອຸສ. ພວກເຂົາກັບເມືອດ້ວຍຄວາມໂສກເສົ້າແລະສິ້ນຫວັງ. ຍ້ອນພຣະເຢຊູຜູ້ຊຶ່ງພວກເຂົາຫວັງວ່າຈະມາປົດປ່ອຍຊົນຊາດອິສຣາແອນໃຫ້ອອກຈາກແອກປົກຄອງຂອງພວກໂຣມັນນັ້ນ, ດຽວນີ້ພຣະອົງໄດ້ຕາຍໄປແລ້ວ. ແຕ່ເມື່ອພຣະເຢຊູເຈົ້າປະຈັກມາແລະເດີນທາງຮ່ວມກັບພວກເຂົາ ແລະໄດ້ອະທິບາຍໃຫ້ພວກເຂົາເຂົ້າໃຈເຖິງສິ່ງທີ່ພຣະອົງໄດ້ກ່າວກັບພວກເຂົາເວລາພຣະອົງຍັງມີຊີວິດຢູ່ນັ້ນ, ພວກເຂົາກໍເລີ່ມຮູ້ສຶກມີຄວາມຮ້ອນຮົນໃຈ. ແລະພວກເຂົາບໍ່ຢາກໃຫ້ພຣະອົງຈາກໄປ. ດ້ວຍເຫດນີ້, ພວກເຂົາຈຶ່ງໄດ້ເຊີນພຣະອົງເຂົ້າຮ່ວມຮັບປະທານອາຫານຄ່ຳຮ່ວມກັບພວກເຂົາ. ແລະສິ່ງທີ່ທຳໃຫ້ພວກເຂົາຈື່ຈຳພຣະອົງໄດ້ຄືເມື່ອເວລາພຣະອົງຊົງບິປັງ. ໝາຍວ່າສິ່ງທີ່ທຳໃຫ້ພວກລູກສິດສອງຄົນນີ້ເຂົ້າໃຈແລະເຊື່ອໃນພຣະເຢຊູເຈົ້າຜູ້ກັບເປັນຄືນມານັ້ນແມ່ນວາຈາຂອງພຣະອົງແລະສິນມະຫາສະໜິດ. ເມື່ອພວກເຂົາຈື່ຈຳພຣະເຢຊູເຈົ້າໄດ້ແລ້ວ, ແທນທີ່ພວກເຂົາຈະໂສກເສົ້າ, ພວກເຂົາພັດມີຄວາມຍິນດີ. ແທນທີ່ພວກເຂົາຈະຢ້ານກົວ, ພວກເຂົາພັດມີຄວາມກ້າຫານແລະກັບຄືນເມືອນະຄອນເຢລູຊາແລມເພື່ອນຳຂ່າວດີນີ້ໄປບອກໃຫ້ພວກສາວົກຄົນອື່ນຮູ້ຈັກ.

ສຳລັບພວກເຮົາໃນວັນນີ້ກໍເຊັ່ນດຽວກັນ. ສິ່ງທີ່ທຳໃຫ້ພວກເຮົາຈື່ຈຳແລະເຊື່ອໃນພຣະເຢຊູຜູ້ໄດ້ຕາຍແລະກັບເປັນຄືນມານັ້ນແມ່ນວາຈາຂອງພຣະອົງແລະພິທີບູຊາມິຊຊານັ້ນເອງ. ເພາະພິທີບູຊາມິຊຊາແມ່ນທຳລ້ຳເລີກແຫ່ງການຕາຍແລະການກັບເປັນຄືນມາຂອງພຣະເຢຊູເຈົ້າ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນທີ່ພຣະອົງກັບເປັນຄືນມານີ້ ໂຜດຊ່ວຍລູກໃຫ້ຈື່ຈຳແລະເຊື່ອໃນພຣະອົງຜ່ານທາງພຣະວາຈາແລະສິນມະຫາສະໜິດທີ່ລູກຈະຮັບໃນວັນສົມໂພດປາສການີ້. ໂຜດຊ່ວຍລູກໃຫ້ມີຄວາມກ້າຫານໃນການເປັນພິຍານເຖິງການກັບຄືນຊີບຂອງພຣະອົງໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ